# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນພາຍໃນ ສປປ ລາວ, ພາກພື້ນ ແລະ ສາກົນ.......................... ໜ້າ 01 - 06

II. ການເຄື່ອນໄຫວວຽກງານ ຂອງການນຳ ພັກ ປປ ລາວ....................................... ໜ້າ 07

III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ.............................................. ໜ້າ 08-11


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ເມສາ 2022**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

**1. ສະພາບການພົ້ນເດັ່ນຢູ່ ສປປ ລາວ**

**1) ສະຖານະການໂຄວິດ-19**

ການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຢູ່ ສປປ ລາວ ຂອງເດືອນເມສາ ມີທ່າອ່ຽງຫຼຸດລົງ ຖ້າທຽບໃສ່ເດືອນຜ່ານມາ, ແຕ່ຕົວເລກລວມຂອງຜູ້ຕິດເຊື້ອທົ່ວປະເທດ ຍັງເປັນຈຳນວນທີ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ເຊິ່ງຮອດວັນທີ 25 ເມສາ 2022, ມີຜູ້ຕິດເຊື້ອທັງໝົດ 205,499, ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 43,633 ຄົນ; ປິ່ນປົວຫາຍດີ 204,144 ຄົນ; ກຳລັງປິ່ນປົວຢູ່ໂຮງໝໍ 1,355 ຄົນ; ເສຍຊີວິດສະສົມທັງໝົດ 734 ຄົນ, ເພີ່ມຂຶ້ນ 82 ຄົນ. ປະຊາຊົນລາວ ຍັງໃຫ້ຄວາມສຳຄັນໃນການສັກວັກແຊງປ້ອງກັນພະຍາດໂຄວິດ, ຮອດວັນທີ 25 ເມສາ 2022, ຜູ້ທີ່ໄດ້ສັກວັກແຊງຄົບ 2 ເຂັມ ມີ 4,799,738 (65.41%), ໄດ້ສັກເຂັມທີໜຶ່ງ 5,762,222 (78.53%). ສ່ວນເຂັມກະຕຸ້ນທີ 3 ແລະ 4 ກໍສາມາດເຂົ້າເຖິງປະຊາຊົນລາວ ເປັນສ່ວນໃຫຍ່ແລ້ວ.

**2). ນາຍົກລັດຖະມົນຕີແຫ່ງ ສປປ ລາວ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ຍີ່ປຸ່ນ**

ໃນວັນທີ 24 ເມສາ 2022, ທ່ານ ພັນຄຳ ວິພາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະໄດ້ສຳເລັດການຢ້ຽມຢາມ, ເຮັດວຽກ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດ ອາຊີ-ປາຊີຟິກ ວ່າດ້ວຍນ້ຳ ຄັ້ງທີ 4, ໂດຍໄດ້ພົບປະສຸດຍອດສອງຝ່າຍ ກັບ ທ່ານ ກິຊິດະ ຟຸມິໂອະ, ນາຍົກລັດຖະມົນຕີຍີ່ປຸ່ນ. ໂອກາດດັ່ງກ່າວ, ສອງນາຍົກລັດຖະມົນຕີ ໄດ້ເປັນສັກຂີພິຍານ ລົງນາມເອກະສານແລກປ່ຽນໂຄງການທຶນການສຶກສາ ເພື່ອການພັດທະນາຊັບພະຍາກອນມະນຸດ (ທຶນການສຶກສາ JDS) ມູນຄ່າ 330 ລ້ານເຢນ ຫຼື ປະມານ 3 ລ້ານໂດລາສະຫະລັດ.

**2. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ**

ວັນທີ 1/4/2022, ສະຫາຍ ຫງວຽນ ຟູ້ຈ້ອງ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ ໄດ້ເປັນປະທານກອງປະຊຸມກົມການເມືອງ ເພື່ອປະກອບຄຳເຫັນໃສ່ຮ່າງບົດສະຫຼຸບ 10 ປີ ແຫ່ງການປະຕິບັດ ມະຕິເລກທີ 11 ຂອງກົມການເມືອງຊຸດທີ XI ກ່ຽວກັບທິດທາງ, ໜ້າທີ່ພັດທະນານະຄອນຫຼວງຮ່າໂນ້ຍ ໄລຍະປີ 2011-2020, ເຊິ່ງ ໄດ້ຕີລາຄາໝາກຜົນໄລຍະ 10 ປີ ໃນການປະຕິບັດແຜນພັດທະນານະຄອນຫຼວງຮ່າໂນ້ຍ ໄລຍະຜ່ານມາ, ເຊິ່ງອຳນາດການປົກຄອງ ແລະ ປະຊາຊົນນະຄອນຫຼວງຮ່າໂນ້ຍ ໄດ້ມີຄວາມພະຍາຍາມ ແລະ ບັນລຸຜົນສຳເລັດຫຼາຍຢ່າງ, ຖານະບົດບາດຂອງນະຄອນຫຼວງຮ່າໂນ້ຍ ນັບມື້ໄດ້ຮັບການຍົກສູງຂຶ້ນ. ພ້ອມກັນນັ້ນ ໄດ້ວາງທິດທາງ, ໜ້າທີ່ພັດທະນານະຄອນຫຼວງຮ່າໂນ້ຍ ຮອດປີ 2030 ໃຫ້ເປັນນະຄອນຫຼວງນຳໜ້າການພັດທະນາທົ່ວປະເທດ ແລະ ການປະຕິບັດຫັນເປັນອຸດສາຫະກຳທັນສະໄໝໃຫ້ສຳເລັດໃນປີ 2045, ເຮັດໃຫ້ກາຍເປັນນະຄອນທີ່ເຊື່ອມຕໍ່ທົ່ວໂລກ, ເປັນນະຄອນຫຼວງແຫ່ງອະລິຍະທຳ, ທັນສະໄໝທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ພັດທະນາຢ່າງຮອບດ້ານ ທຽມທັນກັບບັນດານະຄອນຫຼວງ ແລະ ນະຄອນແຖວໜ້າໃນພາກພື້ນ. ສະຫາຍ ຫງວຽນ ຟູ້ຈ້ອງ ສະເໜີໃຫ້ອົງຄະນະພັກ, ອຳນາດການປົກຄອງ ແລະ ປະຊາຊົນນະຄອນຫຼວງຮ່າໂນ້ຍ ຕ້ອງຮັບຮູ້ເລິກເຊິ່ງ, ຄົບຖ້ວນກ່ຽວກັບຖານະບົດບາດ, ທີ່ຕັ້ງຂອງນະຄອນຫຼວງ ທີ່ມີຄວາມສຳຄັນພິເສດດັ່ງກ່າວ. ນອກນັ້ນ, ຍັງໄດ້ຕົກລົງປັບປຸງກົດໝາຍ ວ່າດ້ວຍນະຄອນຫຼວງ ເພື່ອໃຫ້ຕິດແທດກັບເນື້ອໃນຈິດໃຈ ຂອງມະຕິສະບັບໃໝ່, ສືບທອດເນື້ອໃນ ທີ່ສອດຄ່ອງກັບກົດໝາຍ ທີ່ພວມປະກາດໃຊ້ ເພື່ອປະຕິບັດໃຫ້ເປັນຢ່າງດີ.

ວັນທີ 15/4/2022, ກົມການເມືອງສູນກາງພັກກອມມູນິດຫວຽດນາມ ໄດ້ຈັດກອງປະຊຸມເຊື່ອມຊຶມ ແລະ ຜັນຂະຫຍາຍການປະຕິບັດມະຕິຂອງກົມການເມືອງ ກ່ຽວກັບທິດທາງການພັດທະນາເສດຖະກິດ-ສັງຄົມ, ປກຊ, ປກສ

ເຂດພາກກາງ ແລະ ເຂດພູດອຍທາງພາກເໜືອ ຈົນເຖິງປີ 2030, ວິໄສທັດ 2045 ໂດຍ ການເປັນປະທານ ຂອງ ສະຫາຍ ຫງວຽນ ຟູ້ຈ້ອງ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ, ມີບັນດາສະຫາຍການນຳຂັ້ນສູງຂອງພັກ, ລັດ ແລະ ບັນດາການນຳຫຼັກແຫຼ່ງຂອງ 14 ແຂວງ ເຂົ້າຮ່ວມ. ກອງປະຊຸມຄັ້ງນີ້ ໄດ້ປຶກສາຫາລືຄວາມເປັນເອກະພາບກ່ຽວກັບການເຄື່ອນໄຫວໃນທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບ ກ່ຽວກັບການເຜີຍແຜ່ມະຕິສູນກາງເຂົ້າໃນຊີວິດການເປັນຢູ່ໂດຍໄວ ເພື່ອປະກອບສ່ວນສຳຄັນ ເຂົ້າໃນການປະຕິບັດມະຕິສູນກາງພັກ ຄັ້ງທີ 13 ຢ່າງມີໄຊ, ເຊິ່ງໄດ້ເນັ້ນໜັກຄວາມເປັນຈິດໜຶ່ງໃຈດຽວ ແລະ ຄວາມຕັດສິນໃຈໃນທົ່ວລະບົບການເມືອງ ຂົງເຂດວຽກງານປ່ຽນແປງໃໝ່ ໃນການກໍ່ສ້າງ, ຈັດຕັ້ງຜັນຂະຫຍາຍໃນການປະຕິບັດ ບັນດາມະຕິຂອງກົມການເມືອງ ທາງດ້ານການພັດທະນາເຂດ ແລະ ບາງບັນຫາຍຸດທະສາດທີ່ສຳຄັນ ໃນທົ່ວປະເທດ.

**2). ພັກກອມມູນິດຈີນ**

ວັນທີ 1/4/2022, ສະຫາຍ ສີ ຈິ້ນຜິງ, ປະທານປະເທດຈີນ ໄດ້ພົບປະກັບ ທ່ານ ຊາເລັສ ມີແຊວ, ປະທານສະພາມົນຕີເອີຣົບ ແລະ ທ່ານ ນາງ ອູຊູລາ ວອນເດີເລເອັນ, ປະທານຄະນະກຳມະການສະຫະພາບເອີຣົບ ໃນກອງປະຊຸມສຸດຍອດສະຫະພາບເອີຣົບ-ສປ ຈີນ ຄັ້ງທີ 23 ຜ່ານວີດີໂອທາງໄກ ຢູ່ ນະຄອນຫຼວງປັກກິ່ງ. ສະຫາຍ ສີ ຈິ້ນຜິງ ກ່າວວ່າ ສປ ຈີນ-ເອີຣົບ ຄວນເປັນກຳລັງຫຼັກ ໃນການປົກປັກຮັກສາສັນຕິພາບຂອງໂລກ, ຄວນເປັນສອງຕະຫຼາດໃຫຍ່ ທີ່ຊຸກຍູ້ການພັດທະນາຮ່ວມກັນ ແລະ ຊຸກຍູ້ການພັດທະນາຂອງເສດຖະກິດໂລກ ໃຫ້ກ້າວເຂົ້າສູ່ລວງເລິກ; ພ້ອມນັ້ນ ຍັງໄດ້ເນັ້ນໜັກເຖິງ ການຮ່ວມມື ລະຫວ່າງ ຈີນ-ເອີຣົບ ໄດ້ຮັບໝາກຜົນອັນໃໝ່ ທ່າມກາງຄວາມຫຍຸ້ງຍາກໃນຊຸມປີຜ່ານມາ, ຊຶ່ງເຫັນວ່າ ຈີນ-ເອີຣົບ ມີຜົນປະໂຫຍດຮ່ວມກັນຢ່າງກວ້າງຂວາງ ແລະ ມີພື້ນຖານການຮ່ວມມືທີ່ເລິກເຊິ່ງ. ທ່ານ ຊາເລັສ ມີແຊວ ແລະ ທ່ານ ນາງ ອູຊູລາ ວອນເດີເລເອັນ ກ່າວວ່າ ພາຍໃຕ້ສະຖານະການສາກົນໃນປັດຈຸບັນ, ເອີຣົບ ແລະ ສປ ຈີນ ຄວນເພີ່ມທະວີການແລກປ່ຽນການຮ່ວມມືໃຫ້ຍິ່ງຂຶ້ນ. ເອີຣົບ "ຈະຍຶດໝັ້ນຫຼັກການປະເທດຈີນດຽວ ແລະ ຍິນດີລົງເລິກການຮ່ວມມືໃນຂົງເຂດຕ່າງໆກັບ ສປ ຈີນ ເຊັ່ນ: ເສດຖະກິດ-ການຄ້າ, ການລົງທຶນ, ພະລັງງານ, ການພັດທະນາແບບສີຂຽວ ແລະ ອື່ນໆ"; ສອງຝ່າຍ ຍັງໄດ້ແລກປ່ຽນບັນຫາຄວາມເຄັ່ງຕຶງໃນອູແກຣນ, ເຊິ່ງຜູ້ນຳ ສປ ຈີນ ໄດ້ຮຽກຮ້ອງໃຫ້ບັນດາຝ່າຍກ່ຽວຂ້ອງໃຊ້ວິທີທາງການທູດເຈລະຈາ ເພື່ອຄວາມສະຫງົບໃນຂົງເຂດເອີຣົບ ກໍ່ຄືພາກພື້ນ-ສາກົນ ແລະ ເພື່ອມະນຸດສະທຳຊ່ວຍເຫຼືອຜູ້ໄດ້ຮັບຜົນກະທົບ ແລະ ອື່ນໆ.

ວັນທີ 21 ເມສາ 2022, ກອງປະຊຸມເວທີປຶກສາຫາລືອາຊີໂປອາວ ປະຈຳປີ 2022 (Boao Forum for Asia Annual Conference 2022) ໄດ້ຈັດຂຶ້ນຢູ່ເມືອງ ໂປອາວ, ແຂວງ ໄຫຫຼຳ, ສປ ຈີນ. ສະຫາຍ ສີ ຈິ້ນຜິງ, ປະທານປະເທດຈີນ ໄດ້ກ່າວຄຳປາໄສໃນຫົວຂໍ້: "ຈັບມືກັນຮັບມືກັບສິ່ງທ້າທາຍ ແລະ ຮ່ວມກັນບຸກເບີກອະນາຄົດ" ໂດຍຜ່ານວີດີໂອທາງໄກ ວ່າ: ຄວາມຫຍຸ້ງຍາກໃດໆ ກໍບໍ່ສາມາດຂັດຂວາງການກ້າວເດີນໄປໜ້າຂອງປະຫວັດສາດໄດ້; ຄວາມໝັ້ນຄົງ ແມ່ນປະຖົມປັດໄຈຂອງການພັດທະນາ, ມວນມະນຸດ ແມ່ນປະຊາຄົມຄວາມໝັ້ນຄົງຮ່ວມກັນທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້; ລັດທິເຈົ້າໂລກ ແລະ ເຈົ້າອຳນາດ ມີແຕ່ຈະທຳລາຍສັນຕິພາບໂລກເທົ່ານັ້ນ; ສັນຕິພາບ ແລະ ສະຖຽນລະພາບຂອງພາກພື້ນ ໄດ້ມາຈາກຄວາມພະຍາຍາມຮ່ວມຂອງປະເທດຕ່າງໆ ໃນພາກພື້ນ, ບັນດາປະເທດໃນອາຊີ ຄວນກຳແໜ້ນຊາຕາກຳຂອງຕົນ; ປະເທດໃຫຍ່ ຫຼື ປະເທດນ້ອຍ, ປະເທດເຂັ້ມແຂງ ຫຼື ປະເທດບໍ່ເຂັ້ມແຂງ, ປະເທດໃນພາກພື້ນ ຫຼື ປະເທດນອກພາກພື້ນ ລ້ວນແຕ່ເພີ່ມສີສັນໃຫ້ແກ່ພາກພື້ນ ຫາກບໍ່ແມ່ນສ້າງຄວາມວຸ້ນວາຍ, ແຕ່ຄວນເດີນຕາມເສັ້ນທາງພັດທະນາໂດຍສັນຕິ, ຮ່ວມມືກັນແບບຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ຮ່ວມກັນສ້າງວົງຄະນາຍາດອາຊີ ທີ່ສາມັກຄີ ແລະ ກ້າວໜ້າ.

**3). ການເລືອກຕັ້ງໃນບາງປະເທດ ຂອງທະວີບເອີຣົບ**

- ວັນທີ 3/4/2022, ຜົນການນັບຄະແນນຢ່າງບໍ່ເປັນທາງການຂອງການເລືອກຕັ້ງລັດຖະສະພາຮົງກາລີ

ແມ່ນ ພັກ Fidesz-KDNP ຂອງລັດຖະບານທ່ານ Viktor Orbán, ນາຍົກລັດຖະມົນຕີຮົງກາລີ ໄດ້ຮັບໄຊຊະນະໃນການເລືອກຕັ້ງລັດຖະສະພາຂອງຮົງກາລີ ດ້ວຍຄະແນນສຽງສະໜັບສະໜູນ 53,19% ແລະ ໄດ້ຮັບບ່ອນນັ່ງໃນສະພາ 135 ບ່ອນນັ່ງ ຈາກທັງໝົດ 199 ບ່ອນນັ່ງ, ກວມເອົາ 2/3 ຂອງບ່ອນນັ່ງທັງໝົດໃນລັດຖະສະພາ. ສ່ວນພັກຝ່າຍຄ້ານຂອງ ທ່ານ Péter Márki-Zay ໄດ້ຮັບຄະແນນສຽງ 34,91% ແລະ ໄດ້ຮັບບ່ອນນັ່ງໃນສະພາ 56 ບ່ອນນັ່ງ. ຂະນະທີ່ພັກຝ່າຍຂວາ Mi Hazánk ໄດ້ຮັບຄະແນນສຽງ 6,24% ແລະ ໄດ້ຮັບບ່ອນນັ່ງໃນສະພາ 7 ບ່ອນນັ່ງ.

- ວັນທີ 3/4/2022, ສາທາລະນະລັດ ແຊັກບີ ໄດ້ດຳເນີນການເລືອກຕັ້ງປະທານາທິບໍດີ, ຜົນການເລືອກຕັ້ງທ່ານ Aleksandar Vučić, ໃນນາມພັກກ້າວໜ້າຂອງແຊັກບີ ແລະ ພັກພັນທະມິດຝ່າຍຂວາປະຊານິຍົມ ໄດ້ຮັບໄຊຊະນະດ້ວຍຄະແນນສຽງ 58,54%, ໄດ້ຮັບເລືອກຕັ້ງເປັນປະທານາທິບໍດີ ຂອງ ແຊັກບີ ສະໄໝທີ 2; ສ່ວນຄູ່ແຂ່ງສອງທ່ານ, ທ່ານ Zdravko Ponos ພັກຝ່າຍຄ້ານ (The United for Victory of Serbia) ໄດ້ຮັບຄະແນນ 18,42%; ທ່ານ Milos Jovanovic ໄດ້ 5,82%.

- ການເລືອກຕັ້ງປະທານາທິບໍຝຣັ່ງ ຮອບທຳອິດ ໄດ້ຈັດຂຶ້ນໃນວັນທີ 10/4/2022, ມີຜູ້ລົງສະໝັກຮັບເລືອກຕັ້ງ 12 ທ່ານ. ຜົນການເລືອກຕັ້ງ ມີ 2 ທ່ານ ທີ່ໄດ້ຮັບຄະແນນສຽງສະໜັບສະໜູນຈາກປະຊາຊົນຢູ່ໃນລະດັບສູງ, ແຕ່ບໍ່ມີຜູ້ໄດ້ຮັບຄະແນນສຽງເກີນກວ່າເຄິ່ງ ຄື: ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງຄົນປັດຈຸບັນ, ຈາກພັກສາທາລະນະລັດກ້າວເດີນ ໄດ້ຄະແນນສຽງ 27,85%; ທ່ານ ນາງ Marine Le Pen, ຈາກພັກຝ່າຍຂວາ (National Rally party) ໄດ້ 23,15%. ຕາມກົດໝາຍ ຂອງ ຝຣັ່ງ, ກໍລະນີການເລືອກຕັ້ງປະທານາທິບໍດີ ບໍ່ມີຜູ້ໄດ້ຄະແນນສຽງເກີນເຄິ່ງ ແມ່ນຈະມີການເລືອກຕັ້ງຮອບສອງ ໂດຍໃຫ້ຜູ້ໄດ້ຮັບຄະແນນສຽງສູງເຂົ້າຮອບຕໍ່ໄປ. ດັ່ງນັ້ນ, ວັນທີ 24 ເມສາ 2022, ຝຣັ່ງ ຈຶ່ງໄດ້ດຳເນີນການເລືອກຕັ້ງປະທານາທິບໍດີຮອບສອງ, ເຊິ່ງຜົນການເລືອກຕັ້ງ ແມ່ນທ່ານ Emmanuel Macron ໄດ້ຄະແນນສຽງ 58,6%, ຜູ້ສະໜັບສະໜູນ 18,779,809 ສຽງ, ໄດ້ຮັບໄຊຊະນະເປັນປະທານາທິບໍດີຝຣັ່ງ ສະໄໝທີ II; ສ່ວນ ທ່ານນາງ Marine Le Pen ໄດ້ຄະແນນ 41,8%, ດ້ວຍຄະແນນຈາກປະຊາຊົນ 13,297,728 ສຽງ. ນັກວິເຄາະການເມືອງຈຳນວນໜຶ່ງ ໃຫ້ທັດສະນະວ່າ ທ່ານ Emmanuel Macron ຈະສືບຕໍ່ບໍລິຫານປະເທດຕາມນະໂຍບາຍທີ່ເຄີຍໃຊ້ປົກຄອງປະເທດ 5 ປີຜ່ານມາ ເປັນຕົ້ນ ແມ່ນການແກ້ໄຂບັນຫາເສດຖະກິດ, ຫຼຸດຜ່ອນອັດຕາພາສີການບໍລິການ ແລະ ການຊົມໃຊ້ຕ່າງໆ, ຮັບມືກັບບັນຫາພະຍາດ COVID-19 ແລະອື່ນໆ; ສ່ວນດ້ານການຕ່າງປະເທດ ຈະສືບຕໍ່ຮ່ວມມືກັບສະຫະພາບເອີຣົບ ແລະ ພົວພັນກັບທຸກປະເທດທົ່ວໂລກ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**3. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ**

ຕົວເລກຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ໃນເດືອນເມສາ ມີທ່າອ່ຽງຫຼຸດລົງ ເຊິ່ງຫຼາຍປະເທດ ໄດ້ຜ່ອນຜັນບັນດາມາດຕະການປ້ອງກັນພະຍາດດັ່ງກ່າວ ເພື່ອຟື້ນຟູເສດຖະກິດຂອງຕົນ ໂດຍສະເພາະແມ່ນການສົ່ງເສີມຂະແໜງການທ່ອງທ່ຽວ, ການຄ້າ ແລະ ການລົງທຶນຕ່າງໆ ເຊັ່ນ : ປະເທດໄທ, ສິງກະໂປ, ມາເລເຊຍ, ອິນໂດເນເຊຍ,ຫວຽດນາມ, ກຳປູເຈຍ ແລະ ສປປ ລາວ. ຮອດວັນທີ 26 ເມສາ 2022, ຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ມີ 509,842,259 ຄົນ, ເພີ່ມຂຶ້ນ 32,240,339 ຄົນ ທຽບໃສ່ເດືອນຜ່ານມາ, ເສຍຊີວິດ 6,244,533 ຄົນ, ເພີ່ມຂຶ້ນ 112,755, ປິ່ນປົວຫາຍດີ 462.887.767 ຄົນ, ເພີ່ມຂຶ້ນ 50,385,361 ຄົນ, ເຫັນໄດ້ວ່າ ຈຳນວນຜູ້ຕິດເຊື້ອ ແລະເສຍຊີວິດ ຫຼຸດລົງ, ໃນຂະນະທີ່ຜູ້ທີ່ປິ່ນປົວຫາຍດີ ເພີ່ມຂຶ້ນ ຖ້າທຽບໃສ່ເດືອນມີນາ ຜ່ານມາ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

ໃນລະຫວ່າງວັນທີ 31/3 - 3/4/2022, ທ່ານ Retro Marsudi, ລັດຖະມົນຕີຕ່າງປະເທດອິນໂດເນເຊຍ; ທ່ານ Teodora Locsin, ລັດຖະມົນຕີຕ່າງປະເທດຟີລິບປິນ; ທ່ານ U Wanna Maung Lwin, ລັດຖະມົນຕ່າງປະເທດ ມຽນມາ ແລະ ທ່ານ Don Pramudwinai, ລັດຖະມົນຕີຕ່າງປະເທດຣາຊະອານາຈັກໄທ ໄດ້ຢ້ຽມຢາມ

ສປ ຈີນ ຕາມການເຊີນ ຂອງ ທ່ານ ຫວັງອີ້, ທີ່ປຶກສາແຫ່ງລັດ, ລັດຖະມົນຕ່າງປະເທດ ສປ ຈີນ ເພື່ອເສີມຂະຫຍາຍການຮ່ວມມື ແລະ ຄວາມໄວ້ວາງໃຈເຊິ່ງກັນ ແລະ ກັນຫຼາຍຂຶ້ນ. ການຢ້ຽມຢາມຄັ້ງນີ້, ໂດຍລວມລັດຖະມົນຕ່າງປະເທດ ສປ ຈີນ ແລະ ຄູ່ຮ່ວມຕຳແໜ່ງ ຂອງ ບັນດາປະເທດສະມາຊິກອາຊຽນໄດ້ປຶກສາຫາລື ຕີລາຄາການຮ່ວມມືແມ່ນມີການພັດທະນາດີຂຶ້ນ ເປັນຕົ້ນແມ່ນການສະເຫຼີມສະຫຼອງການພົວພັນ ສປ ຈີນ-ອາຊຽນ ຄົບຮອບ 30 ປີໃນປີ 2021 ຜ່ານມາ, ຮ່ວມມື ແລະ ຊ່ວຍເຫຼືອໃນການປ້ອງກັນ-ສະກັດກັ້ນການແຜ່ລະບາດ ຂອງ ພະຍາດ covid-19 ແລະ ອື່ນໆ. ອາຊຽນ ສະໜັບສະໜູນນະໂຍບາຍການພັດທະນາໜຶ່ງແລວໜຶ່ງເສັ້ນທາງ ຂອງ ສປ ຈີນ, ເຊິ່ງຈະສ້າງໃຫ້ບັນດາປະເທດໃນພາກພື້ນຫຍັບເຂົ້າຫາກັນຫຼາຍຂຶ້ນ, ເປັນພື້ນຖານໃຫ້ແກ່ການໄປມາຫາສູ່ ແລະ ນຳຜົນປະໂຫຍດໃຫ້ທຸກຝ່າຍຢ່າງເທົ່າທຽມກັນ. ສ່ວນບັນຫາທະເລຈີນໃຕ້, ລັດຖະມົນຕີຕ່າງປະເທດ ສປ ຈີນ ຢືນຢັນຈະສ້າງຂົງເຂດດັ່ງກ່າວໃຫ້ມີສັນຕິພາບ, ທຸກຝ່າຍສາມາດໃຊ້ບໍລິການເຂດພື້ນທີ່ທະເລຈີນໃຕ້ ເພື່ອຕ່າງຝ່າຍຕ່າງມີຜົນປະໂຫຍດ; ບໍ່ອະນຸຍາດໃຫ້ປະເທດອື່ນເຂົ້າມາແຊກແຊງ ກໍ່ຄວາມບໍ່ສະຫງົບໃນພາກພື້ນ ອັນຈະແບ່ງແຍກຈີນ ແລະ ອາຊຽນ.

ວັນທີ 3/4/2022, ຄະນະລັດຖະມົນຕີທັງໝົດຂອງສີລັງກາ ໄດ້ປະກາດລາອອກຈາກຕຳແໜ່ງ ເພື່ອຈັດຕັ້ງຄະນະລັດຖະບານຊຸດໃໝ່ ຍ້ອນການປະທ້ວງຂອງປະຊາຊົນທີ່ບໍ່ພໍໃຈຕໍ່ວິກິດການທາງເສດຖະກິດ ແລະ ພາວະຂາດແຄນເຊື້ອໄຟຢ່າງຮຸນແຮງ, ແຕ່ ທ່ານ Gotabaya Rajapaksa, ປະທານາທິບໍດີ ແລະ ທ່ານ Mahinda Rajapaksa, ນາຍົກລັດຖະມົນຕີສີລັງກາ ຍັງສືບຕໍ່ປະຕິບັດໜ້າທີ່ຕໍ່ໄປ. ທ່ານ Gotabaya Rajapaksa ກ່າວວ່າ ເຫດການທີ່ເກີດຂຶ້ນ ເປັນວິກິດການລະດັບຊາດ ທີ່ທຸກພັກການເມືອງ ຈະຕ້ອງຮ່ວມກັນແກ້ໄຂວິກິດການໃນຄັ້ງນີ້. ວັນທີ 18/4/2022, ທ່ານ Gotabaya Rajapaksa, ປະທານາທິບໍດີສີລັງກາ ໄດ້ປະກາດແຕ່ງຕັ້ງຄະນະລັດຖະມົນຕີຊຸດໃໝ່ ຈຳນວນ 21 ທ່ານ, ໃນນັ້ນ 17 ທ່ານ ເປັນລັດຖະມົນຕີໃໝ່; ທັງໄດ້ເລີ່ມເຈລະຈາກັບກອງທຶນການເງິນສາກົນ )IMF) ເພື່ອກູ້ຢືມເງິນ, ຊຶ່ງສີລັງກາ ມີຄວາມຈຳເປັນຕ້ອງການງົບປະມານ ຈຳນວນ 4 ຕື້ໂດລາ ເພື່ອແກ້ໄຂບັນຫາເສດຖະກິດ ແລະ ຊຳລະໜີ້ສິນຂອງປະເທດ. ຈີນ ແລະ ອິນເດຍ ກໍໄດ້ປະກາດໃຫ້ການຊ່ວຍເຫຼືອດ້ານການເງິນຫຼາຍຕື້ໂດລາສະຫະລັດ ໃຫ້ແກ່ສີລັງກາ ເປັນກໍລະນີສຸກເສີນ.

ວັນທີ 3/4/2022, ທ່ານ Arif Alvi, ປະທານາທິບໍດີປາກິດສະຖານ ໄດ້ປະກາດຍຸບສະພາ ເພື່ອໃຫ້ມີການເລືອກຕັ້ງໃໝ່ ເນື່ອງຈາກພັກຝ່າຍຄ້ານໄດ້ອະພິປາຍລົງຄະແນນສຽງບໍ່ໄວ້ວາງໃຈປົດ ທ່ານ Imran Khan, ໃຫ້ລາອອກຈາກນາຍົກລັດຖະມົນຕີ, ຍ້ອນຂາດປະສິດທິພາບໃນການບໍລິຫານປະເທດ, ເສດຖະກິດບໍ່ຂະຫຍາຍຕົວ, ເກີດວິກິດເງິນເຟີ້, ຂາດດຸນດ້ານເສດຖະກິດ-ການຄ້າ ແລະ ອື່ນໆ, ແຕ່ ທ່ານ Khan ໄດ້ກ່າວວ່າ ບັນດາບັນຫາທີ່ເກີດຂຶ້ນດັ່ງກ່າວ ອາເມລິກາມີສ່ວນເຂົ້າມາແຊກແຊງກິດຈະການພາຍໃນປະເທດ ຂອງ ປາກິດສະຖານ. ຂະນະທີ່, ສ. ອາເມລິກາ ອອກມາປະຕິເສດຕໍ່ການກ່າວຫາດັ່ງກ່າວ.

### 3). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ

ໃນເດືອນເມສາ, ຂົງເຂດເອີຣົບ-ອາເມລິກາ ຍັງເປັນຂົງເຂດທີ່ປະຊາຄົມໂລກ ສືບຕໍ່ຕິດຕາມຢ່າງໃກ້ຊິດ ໂດຍສະເພາະແມ່ນບັນຫາຢູແກຣນ ເນື່ອງຈາກສະຖານະການດັ່ງກ່າວ ມີຄວາມເຊື່ອມໂຍງກັບສະຖານະການໂລກໃນປັດຈຸບັນ ລວມທັງວິກິດການດ້ານພະລັງງານ ທີ່ທົ່ວໂລກ ພວມປະເຊີນຢູ່. ພາຍຫຼັງລັດເຊຍ ໄດ້ຖອນກຳລັງອອກຈາກນະຄອນຫຼວງ ກຽບ ຂອງຢູແກຣນ, ລັດເຊຍ ໄດ້ມາຕັ້ງຫຼັກຢູ່ຂົງເຂດ Donbas ແລະ ສືບຕໍ່ການປະຕິບັດການພິເສດທາງການທະຫານຢູ່ເຂດດັ່ງກ່າວ, ສຸມໃສ່ທຳລາຍສາງອາວຸດ, ປ້ອມທະຫານ ແລະ ປາບປາມກຸ່ມຊາດນິຍົມຢູແກຣນ ແລະ ກຸ່ມນີໂອນາຊີ (NeoNazi) ເພື່ອປົດປ່ອຍ ສາທາລະນະລັດ Luhansk ແລະ Donetsk ແລະ ໄດ້ປະຕິບັດການທາງທະຫານ ໃນເມືອງ ມາຣິອູໂປ ໂດຍສະເພາະແມ່ນໂຮງງານຜະລິດເຫຼັກ Azovstal ຊຶ່ງເປັນຖານທີ່ໝັ້ນຂອງທະຫານຮັບຈ້າງຈາກຕາເວັນຕົກ ພ້ອມທັງປະກາດໄຊຊະນະໃນເມືອງດັ່ງກ່າວ. ກະຊວງປ້ອງກັນປະເທດລັດເຊຍ ຍັງໄດ້ຖະແຫຼງ

ວ່າໄດ້ທຳລາຍບັນດາຈຸດທາງການທະຫານສຳຄັນ ຂອງອູແກຣນ ເຊັ່ນ: ເຫຼົ່າຣິບລູກສອນໄຟ, ປືນໃຫຍ່ ແລະ ພື້ນຖານໂຄງລ່າງການທະຫານ ຂອງ ອູແກຣນ ຈຳນວນ 1,053 ແຫ່ງ ໃນນັ້ນ ສູນບັນຊາການ 31 ແຫ່ງ, ສາງນ້ຳມັນເຊື້ອໄຟ 6 ແຫ່ງ, ຈຸດທີ່ຕັ້ງ ຂອງສັດຕູ 910 ຈຸດ ແລະ ກອງກຳລັງປືນໃຫຍ່ 106 ແຫ່ງ; ກອງທັບອາກາດລັດເຊຍ ໄດ້ໂຈມຕີ 73 ເປົ້າໝາຍ ຂອງ ອູແກຣນ (ກອງບັນຊາການ 4 ແຫ່ງ, ສາງອຸປະກອນເຕັກນິກການທະຫານ 57 ແຫ່ງ, ສາງລູກປືນ 4 ແຫ່ງ); ລົດຖັງ 6 ຄັນ, ຍານພາຫະນະຫຸ້ມເກາະ 9 ຄັນ ແລະ ພາຫະນະການທະຫານຈຳນວນໜຶ່ງ. ຄຽງຄູ່ກັນນັ້ນ, ລັດເຊຍ ໄດ້ສືບຕໍ່ໃຫ້ຄວາມຊ່ວຍເຫຼືອຈັດສົ່ງອາຫານ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດ ແລະ ເຄື່ອງໃຊ້ທີ່ຈຳເປັນ ຈຳນວນຫຼາຍກວ່າ 449 ໂຕນ ໄປໃຫ້ປະຊາຊົນອູແກຣນ ທີ່ເມືອງ Kherson, ເຂດສາທາລະນະລັດ Donetsk ແລະ Lugansk ທີ່ໄດ້ຮັບຜົນກະທົບຈາກຄວາມເຄັ່ງຕຶງດັ່ງກ່າວ, ພ້ອມທັງສ້າງສູນທີ່ພັກອາໄສຊົ່ວຄາວໃຫ້ປະຊາຊົນອູແກຣນ ຈຳນວນ 9,500 ແຫ່ງ.

ສ່ວນປະທານາທິບໍດີ ອູແກຣນ ຍັງສືບຕໍ່ຮຽກຮ້ອງ ຕາເວັນຕົກ ແລະ ພັນທະມິດ ເພື່ອຂໍຄວາມຊ່ວຍເຫຼືອໃຫ້ສະໜອງອາວຸດຍຸດໂທປະກອນທີ່ທັນສະໄໝ ໃຫ້ອູແກຣນ ໃນການຕ້ານລັດເຊຍ. ພ້ອມກັນນັ້ນ, ຍັງນຳໃຊ້ທຸກຮູບໃນການໂຄສະນາ ໃສ່ຮ້າຍປ້າຍສີສ້າງຄວາມກຽດຊັງຕໍ່ ປະຊາຊົນລັດເຊຍ ແລະ ບຸກຄົນທີ່ເວົ້າພາສາລັດເຊຍໃນທົ່ວໂລກ ໂດຍການກ່າວຫາວ່າ ທະຫານລັດເຊຍ ໄດ້ສັງຫານປະຊາຊົນຈຳນວນຫຼາຍ ໃນເມືອງ Bucha ໃກ້ກັບນະຄອນຫຼວງ Kyiv ເຊິ່ງ ລັດເຊຍ ກໍໄດ້ປະຕິເສດການກ່າວຫາດັ່ງກ່າວ ແລະ ວ່າເປັນການຈັດສາກຂອງອູແກຣນ ເພື່ອໃຫ້ປະຊາຄົມໂລກກຽດຊັງແລະໂຈມຕີລັດເຊຍ. ສ່ວນ ອາເມລິກາ ແລະ ຕາເວັນຕົກ ໄດ້ສືບຕໍ່ຊ່ວຍເຫຼືອທາງດ້ານອາວຸດ ແລະ ງົບປະມານ ແກ່ອູແກຣນ ໂດຍ ອາເມລິກາ ສົ່ງອາວຸດຍຸດໂທປະກອນໄປຊ່ວຍອູແກຣນອີກມູນຄ່າ 800 ລ້ານໂດລາສະຫະລັດ ຮອດປັດຈຸບັນລວມທັງໝົດ 3 ຕື້ໂດລາສະຫະລັດ; ນອກແວ ສົ່ງເຄື່ອງທຳລາຍລູກສອນໄຟ 100 ເຄື່ອງ, ອົງການນາໂຕ ໄດ້ເຕົ້າໂຮມສະມາຊິກ ແລະ ຄູ່ຮ່ວມມື ທັງໝົດ 32 ປະເທດ ຝຶກຊ້ອມການປ້ອງກັນຄວາມປອດໄພທາງດ້ານອິນເຕີເນັດທາງການທະຫານ (Military cybersecurity games) ຢູ່ເອສໂຕນີ. ສ່ວນບັນດາອົງການຈັດຕັ້ງສາກົນ ເປັນຕົ້ນແມ່ນ ທະນາຄານໂລກ ກໍຈະໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ອູແກຣນ, ສະພາຄວາມໝັ້ນຄົງ ສປຊ ກໍຈະດຳເນີນການພິຈາລະນາບັນຫາສິດທິມະນຸດໃນອູແກຣນ. ຂະນະທີ່ ລັດຖະມົນຕີຕ່າງປະເທດ ເຢຍລະມັນ ກ່າວວ່າ ປະເທດຕົນເອງບໍ່ສາມາດສະໜອງອາວຸດໜັກທີ່ທັນສະໄໝໃຫ້ແກ່ອູແກຣນ, ແຕ່ຈະຊຸກຍູ້ໃຫ້ພັນທະມິດສົ່ງອາວຸດ ແລະ ຄວາມຊ່ວຍເຫຼືອອື່ນໆໃຫ້ອູແກຣນ. ນອກຈາກນັ້ນ, ບັນດາປະເທດສະມາຊິກ ສະຫະພາບເອີຣົບ (ເຢຍລະມັນ, ສະໂລເວນີ, ເອສໂຕນີ, ໂຣມານີ, ປອກຕຸຍການ ແລະ ປະເທດ ອື່ນໆ) ໄດ້ຂັບໄລ່ນັກການທູດລັດເຊຍຈຳນວນ 200 ທ່ານ ອອກຈາກປະເທດ ຂອງຕົນ; ພ້ອມທັງອອກມາດຕະການຂວ້ຳບາດລັດເຊຍ ເປັນຮອບທີ 5 ປະກອບມີການຫ້າມການນຳເຂົ້າຖ່ານຫີນຈາກລັດເຊຍ, ຫ້າມເຮືອ, ກຳປັ່ນຂອງລັດເຊຍເຂົ້າຈອດທ່າເຮືອໃນປະເທດສະມາຊິກສະຫະພາບເອີຣົບ (ຍົກເວັ້ນເຮືອ/ກຳປັ່ນທີ່ຂົນສົ່ງພະລັງງານ) ແລະ ຂວ້ຳບາດທະນາຄານລັດເຊຍເພີ່ມ 4 ທະນາຄານ. ແຕ່ການຂວ້ຳບາດຮອບໃຫມ່ນີ້ຍັງບໍ່ລວມເອົານ້ຳມັນ ແລະ ກາສ ລັດເຊຍ ຍ້ອນວ່າຍັງມີປະເທດສະມາຊິກຈຳນວນໜຶ່ງຄັດຄ້ານ.

ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ກ່າວວ່າ ບັນດາມາດຕະການລົງໂທດ ຂອງ ສ.ເມລິກາ ແລະ ຕາເວັນຕົກ ຕໍ່ລັດເຊຍ ແມ່ນລົ້ມເຫຼວ, ຊຶ່ງພວກເຂົາ ຄາດຫວັງໃຫ້ສະຖານະການດ້ານການເງິນ-ເສດຖະກິດຂອງລັດເຊຍ ເສຍຫາຍ, ລະບົບທະນາຄານຫຼົ້ມ ແລະ ສິນຄ້າຂາດແຄນ, ແຕ່ກົງກັນຂ້າມກັນນະໂຍບາຍດັ່ງກ່າວຜົດນຳໄປສູ່ການເສື່ອມຖອຍທາງເສດຖະກິດຂອງ ສ.ອາເມລິກາ ແລະ ຕາເວັນຕົກ, ເກີດວິກິດການເງິນເຟີ້ຢູ່ຫຼາຍປະເທດ, ຄ່າຂອງເງິນໂດລາອາເມລິກາຕົກຕໍ່າລົງ. ລັດເຊຍ ສາມາດຕ້ານແຮງກົດດັນທີ່ບໍ່ເຄີຍມີມາກ່ອນ ໂດຍການແຂງຄ່າຂຶ້ນຂອງເງິນຣູບ ຂອງລັດເຊຍ ແລະ ການເກີນດຸນການຄ້າທີ່ສູງເປັນປະຫວັດສາດ ຢູ່ທີ່ 58 ຕື້ ໂດລາ ໃນໄຕມາດທຳອິດຂອງ ປີ 2022.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

ກອງປະຊຸມສຸດຍອດລະຫວ່າງລັດຖະມົນຕີຕ່າງປະເທດອາຣັບ ໄດ້ຈັດຂຶ້ນໃນວັນທີ 28 ມີນາ 2022 ທີ່ອິດສະລາແອນ ເຊິ່ງມີປະເທດ ອິດສະລາແອນ, ບາເຣນ, ອີຢິບ, ໂມລັອກໂກ, ສະຫະລັດ ເອເມເຣດ ອາຣັບ, ໂດຍການເຂົ້າຮ່ວມຂອງ ອາເມລິກາ ເພື່ອເປັນການຮັດແໜ້ນການພົວພັນທາງການທູດ ໂດຍໄດ້ປຶກສາຫາລືກ່ຽວກັບການເປັນພັນທະມິດໃນຕາເວັນອອກກາງ ແລະ ຄວາມກັງວົນ ຕໍ່ໂຄງການນິວເຄລຍອີຣານ; ປຶກສາຫາລືກ່ຽວກັບພະລັງງານ ລວມເຖິງບົດບາດດ້ານເສດຖະກິດ, ການທະຫານ ຂອງອາເມລິກາ ໃນຕາເວັນອອກກາງ. ລັດຖະມົນຕີຕ່າງປະເທດອາເມລິກາ ໄດ້ພົບກັບຜູ້ນຳອິດສະລາແອນ ເຊິ່ງໄດ້ສະແດງຄວາມກັງວົນ ໃນການສ້າງສັນຕິພາບໃນພາກພື້ນຕາເວັນອອກກາງ ແລະ ໄດ້ພົບກັບຜູ້ນຳ ປາເລສຕິນ ໂດຍກ່າວວ່າ ຄວນຈະປົກປ້ອງປະຊາຊົນປາເລສຕິນໃຫ້ດີຂຶ້ນ; ຮັບຮູ້ວ່າ ທາງອອກທີ່ດີ ຄືການສືບຕໍ່ມີສອງລັດ ຄື ລັດອິດສະລາແອນ ແລະ ປາເລສຕິນ, ສ່ວນ ປະທານາທິບໍດີປາເລສຕິນ ໄດ້ສະແດງຄວາມກັງວົນ ຕໍ່ການຕັ້ງຖິ່ນຖານຂອງຊາວຢິວ ໃນດິນແດນຂອງປາເລສຕິນ, ຄວນຢຸດຕິຄວາມຮຸນແຮງກັບປາເລສຕິນ. ທ່ານ Yair Lapid, ລັດຖະມົນຕີຕ່າງປະເທດອິດສະລາແອນ ໄດ້ກ່າວວ່າ ກອງປະຊຸມລັດຖະມົນຕີຕ່າງປະເທດລະຫວ່າງ ອິດສະລາແອນ ແລະ 4 ປະເທດອາຣັບ ຈະກາຍເປັນກອງປະຊຸມປະຈຳປີຂອງພາກພື້ນ ແລະ ຈະເຊີນປາເລສຕິນ ເຂົ້າຮ່ວມໃນອະນາຄົດ. ຂະນະດຽວກັນ, ຄວາມຂັດແຍ່ງລະຫວ່າງ ອິດສະລາແອນ ແລະ ປາເລສຕິນ ໃນແຫຼມກາຊາ ຍັງສືບຕໍ່ເກີດຂຶ້ນຢ່າງຕໍ່ເນື່ອງ ເຊິ່ງໃນວັນທີ 18 ເມສາ 2022, ອິດສະລາແອນ ໄດ້ຖະແຫຼງວ່າ ລະບົບປ້ອງກັນທາງອາກາດຂອງອິດສະລາແອນ ໄດ້ຍິງທຳລາຍລູກສອນໄຟ ທີ່ຍິງມາຈາກແຫຼມກາຊາ, ເປັນຄວາມເຄັ່ງຕຶງທີ່ຕໍ່ເນື່ອງມາຈາກເຫດການທີ່ຕຳຫຼວດອິດສະລາແອນ ໄດ້ໂຈມຕີສະຖານທີ່ປະຕິບັດສາສະໜາ ໃນເຂດເຢລູຊະແລມຕາເວັນອອກ ໃນເດືອນຜ່ານມາ ເຊິ່ງເຮັດໃຫ້ປະຊາຊົນປາເລສຕິນ ໄດ້ຮັບບາດເຈັບ ຢ່າງໜ້ອຍ 200 ຄົນ.

ແຫຼ່ງຂ່າວອ້າງອີງ :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, Rodong, The Guardian, CRI, Khmer Times, Aljazeera, RT, Kpl, Lao National Radio, Sputnik, Yonhap, BBC, CNN, AFP, NHK, Aljazeera, CGTN, Reuters, Nournews.

# II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ

**ສະຫາຍເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງຄະນະຜູ້ແທນຂັ້ນສູງ ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ**



ວັນທີ 4 ເມສາ 2022, ທີ່ ສຳນັກງານສູນກາງພັກ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ສະຫາຍ ດິ່ງ ຕຽນ ຢູງ, ກຳມະການກົມການເມືອງສູນກາງພັກ, ເລຂາຄະນະພັກນະຄອນຫຼວງຮ່າໂນ້ຍ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ນະຄອນຫຼວງວຽງຈັນ ແຕ່ວັນທີ 3 - 5/4/2022. ໃນການພົບປະສົນທະນາ, ສະຫາຍເລຂາທິການໃຫຍ່ ທອງລຸນ ສີສຸລິດ ໄດ້ສະແດງຄວາມປິຕິຍິນດີ ທີ່ໄດ້ຕ້ອນຮັບ ສະຫາຍ ດິ່ງ ຕຽນ ຢູງ, ກຳມະການກົມການເມືອງສູນກາງພັກ, ເລຂາຄະນະພັກນະຄອນຫຼວງຮ່າໂນ້ຍ ແລະ ຕີລາຄາສູງຕໍ່ການທີ່ສະຫາຍເລືອກມາຢ້ຽມຢາມ ສປປ ລາວ ເປັນປະເທດທຳອິດ ພາຍຫຼັງທີ່ໄດ້ຮັບເລືອກຕັ້ງເປັນ ເລຂາຄະນະພັກນະຄອນຫຼວງຮ່າໂນ້ຍ, ເຊິ່ງເປັນການສະແດງໃຫ້ເຫັນເຖິງຄວາມເອົາໃຈໃສເປັນພິເສດ ແລະ ການໃຫ້ຄວາມສຳຄັນຂອງພັກ, ລັດ ຫວຽດນາມ ກໍ່ຄື ນະຄອນຫຼວງຮ່າໂນ້ຍ ທີ່ມີຕໍ່ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ແລະ ໄດ້ນຳເອົາໄມຕີຈິດມິດຕະພາບອັນດູດດື່ມ, ຄວາມສາມັກຄີຮັກແພງອັນສະໜິດສະໜົມຂອງ ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ເວົ້າລວມ, ເວົ້າສະເພາະແມ່ນຂອງ ຄະນະພັກ, ອຳນາດການປົກຄອງ ແລະ ປະຊາຊົນນະຄອນຫຼວງຮ່າໂນ້ຍ ມາຍັງ ພັກ, ລັດ ແລະ ປະຊາຊົນລາວ ເວົ້າລວມ, ເວົ້າສະເພາະ ນະຄອນຫຼວງວຽງຈັນ, ສິ່ງດັ່ງກ່າວ ເປັນການໃຫ້ກຳລັງໃຈແກ່ ພັກ, ລັດ ແລະ ປະຊາຊົນລາວ ບັນດາເຜົ່າ ໃນການແກ້ໄຂສະພາບຄວາມຫຍຸ້ງຍາກທີ່ ສປປ ລາວ ກຳລັງປະເຊີນໜ້າໃນປະຈຸບັນ, ທັງເປັນການປະກອບສ່ວນເຂົ້າໃນບັນຍາກາດແຫ່ງການສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ໃນປີນີ້.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

**1. ສະມາຄົມມິດຕະພາບ ລາວ-ສປປ ເກົາຫຼີ ຈັດພິທີປາຖະກະຖາ ວັນເກີດຂອງອະດີດຜູ້ນຳ ສປປ ເກົາຫຼີ**




ວັນທີ 06 ເມສາ 2022, ສະມາຄົມມິດຕະພາບລາວ - ສປປ ເກົາຫຼີ ຮ່ວມກັບສູນກາງແນວລາວສ້າງຊາດ ແລະ ສະຖານເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຈັດພິທີປາຖະກະຖາເນື່ອງໃນໂອກາດ ວັນເກີດຂອງປະທານ ກິມ ອິນ ຊຸງ  ຄົບຮອບ 110 ປີ ( 15/4/1912-15/4/2022) ທີ່ສູນກາງແນວລາວສ້າງຊາດ ໂດຍການເຂົ້າຮ່ວມຂອງ ສະຫາຍ ສິນລະວົງ ຄຸດໄພທູນ, ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວ ລາວສ້າງຊາດ; ສະຫາຍ ອາດສະພັງທອງ ສີພັນດອນ, ກຳມະການສູນກາງພັກ, ເຈົ້າຄອງນະຄອນຫຼວງວຽງຈັນ, ປະ ທານສະມາຄົມມິດຕະພາບ ລາວ-ສປປ ເກົາຫຼີ; ບັນດາຮອງລັດຖະມົນຕີ ແລະ ແຂກຖືກເຊີນ ເຂົ້າຮ່ວມແບບເຊິ່ງໜ້າ ແລະ ແບບອອນລາຍ, ມີການວາງສະແດງຮູບພາບ, ສາຍວີດີໂອ, ສະແດງສິລະປະຂອງ ລາວ ແລະ ສປປ ເກົາຫຼີ ແລະ ປາຖະກະຖາກ່ຽວກັບຊີວິດການເຄື່ອນໄຫວປະຕິວັດ, ຜົນງານການນຳພາຂອງ ປະທານ ກິມ ອິນ ຊຸງ, ຜູ້ນຳທີ່ຍິ່ງໃຫຍ່ ຂອງ ປະຊາຊົນ ສປປ ເກົາຫຼີ ໃນພາລະກິດປະຕິວັດຂອງພັກ, ກຳລັງປະກອບອາວຸດ ແລະ ປະຊາຊົນ ສປປ ເກົາຫຼີ ໃນ ຂະບວນວິວັດແຫ່ງການຕໍ່ສູ້ປົດປ່ອຍຊາດກໍ່ຄືປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ ເຮັດໃຫ້ ສປປ ເກົາຫຼີ ມີການພັດທະນາຮອບດ້ານ, ການເມືອງມີສະຖຽນລະພາບໜັກແໜ້ນ, ວຽກງານປ້ອງກັນຊາດ, ປ້ອງກັນ ຄວາມສະຫງົບ ມີ ຄວາມເຂັ້ມແຂງທັນສະໄໝ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ ສປປ ເກົາຫຼີ ໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ, ເຊິ່ງແມ່ນ ສະຫາຍ ລີ ຍົງ ຊິນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດ ເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ເປັນຜູ້ຂຶ້ນປາຖະກະຖາ ຜົນງານດັ່ງກ່າວ ຂອງ ປະທານ ກິມ ອິນ ຊຸງ.

2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ແລະ ປະດັບຫຼຽນໄຊໃຫ້ແກ່ຄະນະ ສະມາຄົມມິດຕະພາບ ລັດເຊຍ-ລາວ




ວັນທີ 12 ເມສາ 2022, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ສຈ. ປອ. ປານຟີລົບ ອີກໍ (PANFILOV IGOR), ຮອງປະທານສະມາຄົມມິດຕະພາບ ລັດເຊຍ-ລາວ ພ້ອມດ້ວຍຄະນະໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ. ເຊິ່ງ ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຕ້ອນຮັບອັນສະໜິດສະໜົມ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້ ຂອງຄະນະຜູ້ແທນ ສະມາຄົມມິດຕະພາບ ລັດເຊຍ-ລາວ ເຊິ່ງເປັນການສົ່ງເສີມການທູດປະຊາຊົນ, ປະກອບສ່ວນສໍາຄັນເຂົ້າໃນການຮັດແໜ້ນເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມ ລະຫວ່າງສອງປະເທດ ກໍຄືປະຊາຊົນສອງຊາດ ລາວ-ລັດເຊຍ ໃຫ້ນັບມື້ໄດ້ຮັບການພັດທະນາ ແລະ ກ້າວຂຶ້ນສູ່ລະດັບໃໝ່ຢ່າງບໍ່ຢຸດຢັ້ງ. ໂອກາດດັ່ງກ່າວ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ກຽດຕາງໜ້າລັດຖະບານແຫ່ງ ສປປ ລາວ ປະດັບຫຼຽນໄຊແຮງງານຊັ້ນ III ໃຫ້ແກ່ ທ່ານ ອຸສຕິນໂນຟ ນິໂກລາຍ (USTINOV NIKOLAY), ສະມາຊິກສະມາຄົມມິດຕະພາບ ລັດເຊຍ-ລາວ, ຜູ້ອໍານວຍການບໍລິສັດ MK ແລະ ປະດັບຫຼຽນໄຊມິດຕະພາບໃຫ້ແກ່ ທ່ານ ເກຣໂບ ຢູຣີ (KERBO YURY), ຫົວໜ້າຫ້ອງການຜູ້ຕາງໜ້າສະມາຄົມມິດຕະພາບ ລັດເຊຍ-ລາວ ປະຈໍາ ສປປ ລາວ ທີ່ມີຜົນງານອັນພົ້ນເດັ່ນໃນການປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມ ລະຫວ່າງ ສປປ ລາວ-ສ.ລັດເຊຍ ກໍຄືການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

3. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງຄະນະຜູ້ແທນສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ



ວັນທີ 25 ເມສາ 2022, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ໂອ ມຽງ ຮວັນ (Oh Myung Hwan), ປະທານສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ. ໃນໂອກາດດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ຂອງຄະນະຜູ້ແທນສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ, ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສອງປະເທດ ກໍຄື ປະຊາຊົນສອງຊາດ ລາວ-ສ.ເກົາຫຼີ ໃຫ້ນັບມື້ໄດ້ຮັບການພັດທະນາ ແລະ ກ້າວຂຶ້ນສູ່ລະດັບໃໝ່ຢ່າງບໍ່ຢຸດຢັ້ງ; ຊົມເຊີຍຕໍ່ການພົວພັນຮ່ວມມືທີ່ດີ ຕະຫຼອດໄລຍະເກືອບສອງທົດສະວັດທີ່ສ້າງຕັ້ງສະມາຄົມມິດຕະພາບຮ່ວມກັນ ລະຫວ່າງ ລາວ-ສ.ເກົາຫຼີ ແລະ ສ.ເກົາຫຼີ-ລາວ ໃນການເຮັດບົດບາດການທູດປະຊາຊົນ ເພື່ອສະໜັບສະໜູນການພົວພັນດ້ານລັດຂອງສອງປະເທດໃຫ້ມີປະສິດທິຜົນຍິ່ງໆຂຶ້ນ ໂດຍສະເພາະຊຸກຍູ້ການຮ່ວມມືໃນຂະແໜງເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ວັດທະນະທຳ ແລະ ການທ່ອງທ່ຽວ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ສ.ເກົາຫຼີ.

ໃນວັນດຽວກັນນີ້, ສອງສະມາຄົມມິດຕະພາບ ລາວ-ສ.ເກົາຫຼີ ແລະ ສ.ເກົາຫຼີ-ລາວ ໄດ້ຈັດກອງປະຊຸມພົບປະສອງຝ່າຍ ເຊິ່ງຝ່າຍລາວນຳໂດຍ ທ່ານ ຄຳສອຍ ແກ້ວດາລາວົງ, ປະທານສະມາຄົມມິດຕະພາບ ລາວ-ສ.ເກົາຫຼີ ແລະ ຝ່າຍ ສ.ເກົາຫຼີ ນຳໂດຍ ທ່ານ ໂອ ມຽງ ຮວັນ, ປະທານສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ. ສອງຝ່າຍໄດ້ຕີລາຄາການເຄື່ອນໄຫວວຽກງານ, ການຈັດກິດຈະກຳຮ່ວມກັນໃນໄລຍະຜ່ານມາ ແລະ ວາງແຜນການຮ່ວມມືໃນຕໍ່ໜ້າລະຫວ່າງສອງສະມາຄົມ ເພື່ອປະກອບສ່ວນເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືລະຫວ່າງສອງປະເທດ ແລະ ປະຊາຊົນສອງຊາດລາວ ແລະ ສ.ເກົາຫຼີ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງໆຂຶ້ນ.

## 4. ຄະນະພົວພັນຕ່າງປະເທດສູນກາງພັກ ສະຫຼຸບວຽກງານກວດກາ ແລະ ຈັດພິທີ ມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021



ວັນທີ 27 ເມສາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບວຽກງານກວດກາ ປະຈຳປີ 2021 ແລະ ຈັດພິທີ ມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ 06 ໜ່ວຍພັກ ຂຶ້ນກັບອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ໂດຍການເປັນປະທານ ຂອງ ສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ເລຂາຄະນະພັກ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ມີບັນດາສະຫາຍໃນຄະນະພັກ ບັນດາຄະນະໜ່ວຍພັກ ແລະ ສະມາຊິກພັກ ຂັ້ນພະແນກ ເຂົ້າຮ່ວມທັງໝົດຈຳນວນ 50 ສະຫາຍ;

ໃນພິທີ ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າ ຄຕພ, ປະທານກວດກາຄະນະພັກ ໄດ້ໃຫ້ກຽດເຜີຍແຜ່ບົດສະຫຼຸບຜົນສຳເລັດ ຂອງກອງປະຊຸມວຽກງານກວດກາທົ່ວປະເທດ ຄັ້ງທີ IV ແລະ ສະຫາຍ ນາງ ພອນດາວັນ ພົນສະຫວັນ, ຫົວໜ້າຫ້ອງການພັກ, ຫົວໜ້າກົມຈັດຕັ້ງ-ພະນັກງານ ໄດ້ຂຶ້ນຜ່ານບົດສະຫຼຸບວຽກງານກວດກາ ພັກ-ລັດ ແລະ ປະເມີນຜົນການຮັກສານາມມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ແລະ ທິດທາງແຜນການ ປີ 2022 ຂອງ ຄຕພ.

ໃນຕອນທ້າຍ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ກຽດມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ໃຫ້ແກ່ 06 ໜ່ວຍພັກ ພ້ອມທັງໃຫ້ກຽດໂອ້ລົມຕໍ່ທີ່ປະຊຸມ ໂດຍສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງທັງ 06 ໜ່ວຍພັກ ທີ່ໄດ້ມີຄວາມພະຍາມ ແລະ ເຊີດຊູຄວາມຮັບຜິດຊອບສູງໃນການຮັກສານາມມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ແລະ ເຊື່ອໝັ້ນວ່າ ບັນດາໜ່ວຍພັກດັ່ງກ່າວຈະສືບຕໍ່ນຳພາໜ່ວຍພັກຂອງຕົນໃຫ້ຮັກສານາມມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃນປີຕໍ່ໄປ ແລະ ໄດ້ຮຽກຮ້ອງໃຫ້ບັນດາພະນັກງານສະມາຊິກພັກທຸກສະຫາຍ ຈົ່ງສືບຕໍ່ບົດບາດເປັນແບບຢ່າງນຳໜ້າພາທາງ, ມີສະຕິຕໍ່ການຈັດຕັ້ງຢືນຢູ່ແຖວໜ້າຂອງທຸກຂະບວນການ ເພື່ອຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ແລະ ແຜນພັດທະນາ ຂອງຄະນະພົວພັນຕ່າງປະເທດສູນກາງພັກ (2021-2025) ໃຫ້ບັນລຸຄາດໝາຍທີ່ວາງໄວ້.